ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍການຄຸ້ມຄອງ ຫ້ອງປິ່ນປົວສັດ, ຮ້ານຂາຍຢາ ແລະເຄື່ອງມືສັດຕະວະແພດ

ຈັດພິມໂດຍ :

ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ປ່າໄມ້

2014

## ສາລະບານ


ໜ້າ

**ໝວດທີ 1. ບົດບັນຍັດທົ່ວໄປ** 02

ມາດຕາ 1. ຈຸດປະສົງ...................................................................................... 02

ມາດຕາ 2. ການອະທິບາຍຄໍາສັບ......................................................................... 02

ມາດຕາ 3. ຂອບເຂດການນໍາໃຊ້............................................................................ 04

**ໝວດທີ 2. ການດໍາເນີນກິດຈະການ ຫ້ອງປິ່ນປົວສັດ** 04

ມາດຕາ 4. ເງື່ອນໄຂຂອງຜູ້ຂໍອະນຸຍາດດໍາເນີນກິດຈະການຫ້ອງປິ່ນປົວສັດ................................................................................ 04

ມາດຕາ 5. ສະຖານທີ່ຕັ້ງ ແລະ ອຸປະກອນຮັບໃຊ້ ຫ້ອງປິ່ນປົວສັດ.......... 05

ມາດຕາ 6. ການຂໍອະນຸຍາດດໍາເນີນກິດຈະການຫ້ອງປິ່ນປົວສັດ........... 05

ມາດຕາ 7. ການຕໍ່ໃບອະນຸຍາດດໍາເນີນກິດຈະການຫ້ອງປິ່ນປົວສັດ...... 06

ມາດຕາ 8. ສິດ ແລະ ພັນທະຂອງຜູ້ປະກອບການຫ້ອງປິ່ນປົວສັດ......... 06

ມາດຕາ 9. ພັນທະຂອງຜູ້ມາໃຊ້ບໍລິການ ຫ້ອງປິ່ນປົວສັດ....................... 07

ມາດຕາ 10. ການໂຈະ ແລະ ການຍົກເລີກການດໍາເນີນກິດຈະການ ຫ້ອງປິ່ນປົວສັດ...................................................................................... 07

**ໝວດທີ 3. ຮ້ານຂາຍຢາ ແລະ ເຄື່ອງມືສັດຕະວະແພດ** 08

ມາດຕາ 11. ເງື່ອນໄຂຂອງຜູ້ຂໍອະນຸຍາດດໍາເນີນກິດຈະການຂາຍຢາ ແລະ ເຄື່ອງມືສັດຕະວະແພດ................................................... 08

ມາດຕາ 12. ສະຖານທີ່ຕັ້ງ ແລະ ອຸປະກອນຮັບໃຊ້ໃນຮ້ານຂາຍຢາ ແລະ ເຄື່ອງມືສັດຕະວະແພດ............................................................... 09

ມາດຕາ 13. ການຂໍອະນຸຍາດດໍາເນີນກິດຈະການຂາຍຢາ ແລະ ເຄື່ອງມືສັດຕະວະແພດ.............................................................................. 10

ມາດຕາ 14. ການຕໍ່ໃບອະນຸຍາດດໍາເນີນກິດຈະການຂາຍຢາແລະເຄື່ອງມືສັດຕະວະແພດ........................................................................ 11

ມາດຕາ 15. ພັນທະຂອງຜູ້ປະກອບການຂາຍຢາ ແລະ ເຄື່ອງມືສັດຕະອະແພດ........ 11
ມາດຕາ 16. ການໂຈະ ແລະ ຍົກເລີກກິດຈະການຂາຍຢາ ແລະ ເຄື່ອງມືສັດຕະອະແພດ........ 12
**ໝວດທີ 4. ຂໍ້ຫ້າມ** 12
ມາດຕາ 17. ຂໍ້ຫ້າມສຳລັບຜູ້ປະກອບການ........ 12
**ໝວດທີ 5. ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ** 14
ມາດຕາ 18. ນະໂຍບາຍຕໍ່ຜູ້ມີຜົນງານ........ 14
ມາດຕາ 19. ມາດຕະການຕໍ່ຜູ້ລະເມີດ........ 14
**ໝວດທີ 6. ບົດບັນຍັດສຸດທ້າຍ** 14
ມາດຕາ 20. ການຈັດຕັ້ງປະຕິບັດ........ 14
ມາດຕາ 21. ຜົນສັກສິດ........ 15

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
**************

ກະຊວງກະສິກຳ ແລະປ່າໄມ້ ເລກທີ 1973 /ກປ
ນະຄອນຫຼວງວຽງຈັນ, ວັນທີ 23 AUG 2012

# ຂໍ້ຕົກລົງ
# ຂອງລັດຖະມົນຕີ
# ວ່າດ້ວຍການຄຸ້ມຄອງ ຫ້ອງປິ່ນປົວສັດ, ຮ້ານຂາຍຢາ ແລະເຄື່ອງມືສັດຕະວະແພດ

- ອີງຕາມກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ເລກທີ 03/ສພຊ, ລົງວັນທີ 25 ກໍລະ ກົດ 2008;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດ ຕັ້ງ ແລະການເຄື່ອນໄຫວຂອງ ກະຊວງກະສິກຳ ແລະປ່າໄມ້;
- ອີງຕາມໜັງສືສະເໜີຂອງກົມລ້ຽງສັດ ແລະການປະມົງ ເລກທີ 0045/ກລປ, ລົງວັນທີ 11 ເມສາ 2012.

**ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້ ອອກຂໍ້ຕົກລົງ:**

# ໝວດທີ 1
# ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະລະບຽບການກ່ຽວກັບການຄຸ້ມຄອງຫ້ອງປິ່ນປົວສັດ, ຮ້ານຂາຍຢາ ແລະເຄື່ອງມືສັດຕະວະແພດ ເພື່ອຮັບປະກັນຄວາມປອດໄພ ແລະເປັນທຳແກ່ຜູ້ບໍລິໂພກ, ເຈົ້າຂອງສັດ ແລະຜູ້ປະກອບການ ທັງສອດຄ່ອງກັບກົດໝາຍວ່າດ້ວຍການລ້ຽງສັດ ແລະການສັດຕະວະແພດ ແລະມາດຕະຖານເຕັກນິກຂອງຂະແໜງການວາງອອກ.

**ມາດຕາ 2. ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຫ້ອງປິ່ນປົວສັດ** ໝາຍເຖິງ ສະຖານທີ່ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການກ່ຽວກັບການບໍລິການປິ່ນປົວສັດ ຈາກຂະແໜງການກະສິກຳ ແລະປ່າໄມ້ ແລະໄດ້ຂຶ້ນທະບຽນວິສາຫະກິດ ໂດຍຖືກຕ້ອງຕາມກົດໝາຍ;
2. **ຮ້ານຂາຍຢາ ແລະເຄື່ອງມືສັດຕະວະແພດ** ໝາຍເຖິງ ສະຖານທີ່ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນກິດຈະການກ່ຽວກັບການຂາຍ, ນຳເຂົ້າ ແລະສົ່ງອອກ ຢາປ້ອງກັນ, ຢາປິ່ນປົວພະຍາດສັດ ແລະເຄື່ອງມືສັດຕະວະແພດ ຈາກຂະແໜງການກະສິກຳ ແລະປ່າໄມ້ ແລະໄດ້ຂຶ້ນທະ ບຽນວິສາຫະກິດ ໂດຍຖືກຕ້ອງຕາມກົດໝາຍ;
3. **ຢາກັນພະຍາດສັດ** ໝາຍເຖິງຢາວັກຊິນທີ່ນຳໃຊ້ເຂົ້າໃນການສັກຫຼືຍອດໃຫ້ສັດ ເພື່ອສ້າງ ພູມຄຸ້ມກັນຕ້ານກັບພະຍາດລະບາດສັດໃດໜຶ່ງເທົ່ານັ້ນ;
4. **ຢາປິ່ນປົວພະຍາດສັດ** ໝາຍເຖິງ ວັດຖຸຢ່າງໜຶ່ງ ຫຼືວັດຖຸທີ່ປະກອບຫຼາຍຢ່າງທີ່ອອກລິດ ແລະບໍ່ອອກລິດ ປະສົມເຂົ້າກັນ ຊຶ່ງນຳມາໃຊ້

ສຳລັບປິ່ນປົວພະຍາດສັດ, ບັນເທົາອາການເຈັບປວດ ຫຼືປ່ຽນແປງໜ້າທີ່ຂອງຮ່າງກາຍ ແລະຟື້ນຟູສຸຂະພາບຮ່າງກາຍຂອງສັດ ໃຫ້ດີຂຶ້ນ;

5. **ຢາບຳລຸງສັດ** ໝາຍເຖິງ ວັດຖຸຢ່າງໜຶ່ງ ຫຼືວັດຖຸທີ່ປະກອບດ້ວຍຫຼາຍຢ່າງ ທີ່ອອກລິດ ແລະບໍ່ອອກລິດ ປະສົມເຂົ້າກັນ ຊຶ່ງນຳມາໃຊ້ເຂົ້າໃນການເຊີດຊູ, ເສີມ ແລະບຳລຸງ ເພື່ອເຮັດໃຫ້ສຸຂະພາບຮ່າງກາຍຂອງສັດແຂງແຮງ;
6. **ເຄື່ອງມືສັດຕະວະແພດ** ໝາຍເຖິງ ອຸປະກອນຕ່າງໆ ທີ່ນຳມາໃຊ້ເຂົ້າໃນການບໍລິການສັດ ຕະວະແພດ ເຊັ່ນ: ເຄື່ອງມືຜ່າຕັດສັດ, ຊະແລ່ງ,ເຂັມສັກຢາ ແລະອື່ນໆ;
7. **ຄອກຂັງສັດ** ໝາຍເຖິງ ສະຖານທີ່ທີ່ສ້າງຂຶ້ນ ເພື່ອເອົາໄວ້ຂັງສັດເຈັບ ຫຼືບໍ່ເຈັບ ເພື່ອສັງເກດ ອາການຂອງສັດ;
8. **ເຈົ້າຂອງສັດ** ໝາຍເຖິງ ບຸກຄົນໃດໜຶ່ງ ຫຼືອົງການໃດໜຶ່ງ ທີ່ມີສັດລ້ຽງເປັນຂອງຕົນເອງ ໂດຍຖືກຕ້ອງຕາມກົດໝາຍວ່າດ້ວຍການລ້ຽງສັດ ແລະການສັດຕະວະແພດ;
9. **ຜູ້ໄດ້ຮັບອະນຸຍາດ** ໝາຍເຖິງ ເຈົ້າຂອງທຸລະກິດ ທີ່ໄດ້ຮັບອະນຸຍາດໃຫ້ເຄື່ອນໄຫວທຸລະກິດ ກ່ຽວກັບການບໍລິການປິ່ນປົວສັດ, ການຂາຍຢາກັນ, ປິ່ນປົວພະຍາດສັດ ແລະເຄື່ອງມືສັດ ຕະວະແພດ;
10. **ຜູ້ດຳເນີນການ** ໝາຍເຖິງ ຜູ້ໄດ້ຮັບໃບອະນຸຍາດປະກອບວິຊາຊີບດ້ານການສັດຕະວະແພດ ຈາກຂະແໜງກະສິກຳ ແລະປ່າໄມ້ ໃຫ້ດຳເນີນການບໍລິການປິ່ນປົວສັດ, ການຂາຍຢາກັນ, ປິ່ນປົວພະຍາດສັດ ແລະເຄື່ອງມືສັດຕະວະແພດ;
11. **ຜູ້ປິ່ນປົວສັດ** ໝາຍເຖິງ ວິຊາການຜູ້ທີ່ມີໃບປະກາດສະນີຍະບັດດ້ານສັດຕະວະແພດ ແລະໄດ້ຮັບອະນຸຍາດດຳເນີນວິຊາຊີບຈາກຂະແໜງກະສິກຳ ແລະປ່າໄມ້ ເຮັດວຽກຕົວຈິງໃນການ ປິ່ນປົວສັດ;

12. **ຜູ້ຊ່ວຍ** ໝາຍເຖິງ ຜູ້ທີ່ຖືກຈ້າງມາເປັນຜູ້ຊ່ວຍການບໍລິການປິ່ນປົວ ສັດ, ຂາຍຢາກັນ, ປິ່ນປົວພະຍາດສັດ ແລະເຄື່ອງມືສັດຕະວະແພດ;
13. **ຜູ້ອະນຸຍາດ** ໝາຍເຖິງ ກົມລ້ຽງສັດ ແລະການປະມົງ ແລະພະແນກ ກະສິກຳ ແລະປ່າໄມ້ປະ ຈຳແຂວງ ຫຼືນະຄອນ.

### ມາດຕາ 3. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ທີ່ກ່ຽວຂ້ອງກັບການດຳເນີນກິດຈະການຫ້ອງປິ່ນປົວສັດ, ຮ້ານຂາຍຢາ ແລະ ເຄື່ອງມືສັດຕະວະແພດ ໃນ ສປປ ລາວ ແລະບໍ່ໄດ້ກວມການເຄື່ອນໄຫວຂອງ ສັດຕະວະແພດບ້ານ.

## ໝວດທີ 2
## ການດຳເນີນກິດຈະການ ຫ້ອງປິ່ນປົວສັດ

### ມາດຕາ 4. ເງື່ອນໄຂຂອງຜູ້ຂໍອະນຸຍາດດຳເນີນກິດຈະການຫ້ອງປິ່ນປົວສັດ

ຜູ້ຂໍອະນຸຍາດດຳເນີນກິດຈະການ ຫ້ອງປິ່ນປົວສັດ ຕ້ອງມີເງື່ອນໄຂຄົບ ຖ້ວນ ດັ່ງນີ້:

1. ມີສຸຂະພາບແຂງແຮງ ແລະອາຍຸບໍ່ຕ່ຳກວ່າ 20 ປີ ບໍລິບູນ;
2. ມີພູມລຳເນົາຕັ້ງຢູ່ ສປປ ລາວ ຖາວອນ ບໍ່ຕ່ຳກວ່າ 5 ປີ;
3. ບໍ່ຢູ່ໃນໄລຍະດຳເນີນຄະດີ ຫຼືຖືກປະຕິບັດວິໄນ;
4. ບໍ່ມີປະຫວັດລົ້ມລະລາຍທາງດ້ານທຸລະກິດມາກ່ອນ;
5. ມີສະຖານທີ່ປິ່ນປົວເໝາະສົມຕາມລະບຽບການທີ່ກຳນົດໄວ້;
6. ມີອຸປະກອນ, ເຄື່ອງມືສັດຕະວະແພດ ແລະຢາປິ່ນປົວພະຍາດສັດ ພຽງພໍ;
7. ມີບຸກຄະລາກອນພຽງພໍ ແລະນັກວິຊາການດ້ານສັດຕະວະແພດ ຂັ້ນປະລິນຍາຕີ ຫຼືທຽບເທົ່າ ຂຶ້ນໄປ.

**ມາດຕາ 5. ສະຖານທີ່ຕັ້ງ ແລະອຸປະກອນຮັບໃຊ້ ຫ້ອງປິ່ນປົວສັດ**

ສະຖານທີ່ຕັ້ງ ແລະອຸປະກອນຮັບໃຊ້ຫ້ອງປິ່ນປົວສັດ ຕ້ອງໄດ້ຕາມມາດຕະຖານເຕັກນິກວິຊາການ ດັ່ງນີ້:

1. **ສະຖານທີ່:** ຕັ້ງຢູ່ບ່ອນສະອາດ, ເປັນຫ້ອງ ຫຼືເຮືອນສະເພາະ, ບໍ່ປົນເປກັບສະຖານທີ່ພັກເຊົາ ຫຼືບ່ອນຂາຍເຄື່ອງອື່ນ; ມີເນື້ອທີ່ບໍ່ຕ່ຳກວ່າ 20 ຕາແມັດ; ມີຄອກຂັງສັດສະເພາະ ທີ່ມີເນື້ອ ທີ່ບໍ່ຕ່ຳກວ່າ 12 ຕາແມັດ;
2. **ປ້າຍຮ້ານ:** ພື້ນສີຂຽວ ຫຼືສີຟ້າ, ອັກສອນສີຂາວ ຂຶ້ງຂຽນເປັນພາສາລາວ ແລະພາສາຕ່າງປະເທດ ໂດຍລະບຸຊື່ເຈົ້າຂອງຮ້ານ, ທີ່ຢູ່, ໂທລະສັບ, ເລກທະບຽນທຸລະກິດ ແລະເລກທີອະນຸຍາດດຳເນີນກິດຈະການ;
3. **ອຸປະກອນ:** ມີໂຕະທີ່ສາມາດອະນາໄມໄດ້ສະດວກ ແລະມີອຸປະກອນສັດຕະວະແພດ;
4. **ເອກະສານປະຈຳຮ້ານ:** ໃບອະນຸຍາດດຳເນີນກິດຈະການ ຈາກກົມລ້ຽງສັດ ແລະການປະມົງ ຫຼືພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນ, ໃບທະບຽນວິສາຫະກິດຈາກຂະແໜງ ອຸດສາຫະກຳ ແລະການຄ້າ ແລະປຶ້ມຕິດຕາມການກວດກາຂອງເຈົ້າໜ້າທີ່ສັດຕະວະແພດ.

**ມາດຕາ 6. ການຂໍອະນຸຍາດດຳເນີນກິດຈະການຫ້ອງປິ່ນປົວສັດ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ມີຈຸດປະສົງດຳເນີນກິດຈະການຫ້ອງປິ່ນປົວສັດ ຕ້ອງປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 4 ຂອງຂໍ້ຕົກລົງສະບັບນີ້ ແລະປະກອບເອກະສານ ເພື່ອຂໍອະນຸຍາດຈາກກົມລ້ຽງສັດ ແລະການປະມົງ ຫຼື ພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນ ດັ່ງນີ້:

1. ໃບຄຳຮ້ອງ ຂໍອະນຸຍາດເປີດຫ້ອງປິ່ນປົວສັດ;

2. ໃບຊີວະປະຫວັດຫຍໍ້ທີ່ມີຮູບຕິດ ບໍ່ກາຍ 1 ປີ;
3. ໃບຢັ້ງຢືນສຸຂະພາບ ບໍ່ກາຍ 3 ເດືອນ;
4. ໃບຢັ້ງຢືນທີ່ຢູ່ປັດຈຸບັນ ທີ່ມີຮູບຕິດ;
5. ຮູບຖ່າຍບໍ່ເກີນ 1 ປີ, ຂະໜາດ 3 x 4 ຈຳນວນ 3 ໃບ;
6. ໃບແຈ້ງໂທດຂອງຜູ້ກ່ຽວ ແລະຜູ້ດຳເນີນການ, ຜູ້ປິ່ນປົວສັດ ແລະ ຜູ້ຊ່ວຍ;
7. ໃບຢັ້ງຢືນຂອງກົມກອງທີ່ສັງກັດ (ໃນກໍລະນີເປັນພະນັກງານສັງກັດລັດ);
8. ແຜນອາດທີ່ຈະຕັ້ງຮ້ານບໍລິການປິ່ນປົວສັດ;
9. ໃບຢັ້ງຢືນການລົງກວດກາສະຖານທີ່ຂອງເຈົ້າໜ້າທີ່ກ່ອນອະນຸຍາດ;
10. ບັນຊີອຸປະກອນຮັບໃຊ້ຢູ່ໃນຮ້ານບໍລິການປິ່ນປົວສັດ.

**ມາດຕາ 7. ການຕໍ່ໃບອະນຸຍາດດຳເນີນກິດຈະການຫ້ອງປິ່ນປົວສັດ**

ໃບອະນຸຍາດດຳເນີນກິດຈະການຫ້ອງປິ່ນປົວສັດ ມີອາຍຸການນຳໃຊ້ 1 ປີ. ກ່ອນຈະໝົດອາຍຸການນຳໃຊ້ 1 ເດືອນ ຖ້າຜູ້ປະກອບ ມີຈຸດປະສົງດຳເນີນກິດຈະການຕໍ່ ຕ້ອງປະກອບເອກະສານເພື່ອ ຂໍຕໍ່ ດັ່ງນີ້:

1. ໃບຄຳຮ້ອງ ຂໍຕໍ່ບໍລິການປິ່ນປົວສັດ;
2. ໃບຢັ້ງຢືນສຸຂະພາບ ບໍ່ກາຍ 3 ເດືອນ;
3. ໃບຢັ້ງຢືນທີ່ຢູ່ປັດຈຸບັນທີ່ມີຮູບຕິດ;
4. ຮູບຖ່າຍບໍ່ເກີນ 1 ປີ, ຂະໜາດ 3 x 4 ຈຳນວນ 3 ໃບ;
5. ບົດບັນທຶກການລົງກວດກາ ການດຳເນີນກິດຈະການຫ້ອງປິ່ນປົວສັດ ຈາກເຈົ້າໜ້າທີ່ສັດຕະ ວະແພດ.

**ມາດຕາ 8. ສິດ ແລະພັນທະຂອງຜູ້ປະກອບການຫ້ອງປິ່ນປົວສັດ**

ໃນການດຳເນີນກິດຈະການຫ້ອງປິ່ນປົວສັດຜູ້ປະກອບການມີສິດ ແລະ ພັນທະຕົ້ນຕໍ ດັ່ງນີ້:

1. ສະເໜີເອົາຜູ້ດຳເນີນການ ຫຼືຜູ້ຊ່ວຍທີ່ມີໃບຢັ້ງຢືນອະນຸຍາດວິຊາຊີບຈາກກົມລ້ຽງສັດ ແລະການປະມົງ ມາເປັນຜູ້ປະຈຳຮ້ານຂອງຕົນ;
2. ຮັບປະກັນຄວາມປອດໄພຕໍ່ຊີວິດຂອງສັດ, ບໍ່ສ້າງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມຈາກການ ບໍລິການຂອງຕົນ;
3. ອຳນວຍຄວາມສະດວກໃຫ້ແກ່ການກວດກາຂອງເຈົ້າໜ້າທີ່ສັດຕະວະແພດ;
4. ເອົາໃຈໃສ່ປິ່ນປົວສັດຂອງຜູ້ມາໃຊ້ບໍລິການ ຕາມຫຼັກວິຊາການຂອງສັດຕະວະແພດ;
5. ເກັບກຳສະຖິຕິສັດເຈັບ ທີ່ເອົາມາປິ່ນປົວຢູ່ຮ້ານຂອງຕົນ ເພື່ອລາຍງານຕໍ່ເຈົ້າໜ້າທີ່ສັດຕະ ວະແພດ;
6. ເສຍຄ່າທຳນຽມ ແລະຄ່າບໍລິການ ຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມແຕ່ຄ່າບໍລິການທີ່ປະກາດໃຊ້ໃນແຕ່ລະໄລຍະ;
7. ປະຕິບັດພັນທະອື່ນ ຕາມຫຼັກວິຊາການສັດຕະວະແພດ.

**ມາດຕາ 9. ພັນທະຂອງຜູ້ມາໃຊ້ບໍລິການ ຫ້ອງປິ່ນປົວສັດ**

ຜູ້ມາໃຊ້ບໍລິການຫ້ອງປິ່ນປົວສັດ ຫຼືເຈົ້າຂອງສັດ ຕ້ອງໃຫ້ຄວາມຮ່ວມມືໃນການຕອບສະໜອງຂໍ້ມູນກ່ຽວກັບສັດຂອງຕົນ ຢ່າງຖືກຕ້ອງ, ອຳນວຍຄວາມສະດວກໃຫ້ແກ່ຜູ້ຊ່ວຍ ແລະຜູ້ປິ່ນປົວສັດ ພ້ອມ ທັງຈ່າຍຄ່າບໍລິການຕາມການຕົກລົງກັນ.

**ມາດຕາ 10. ການໂຈະ ແລະການຍົກເລີກການດຳເນີນກິດຈະການ ຫ້ອງປິ່ນປົວສັດ**

ກົມລ້ຽງສັດ ແລະການປະມົງ ແລະພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນ ມີໜ້າ ທີ່ຄຸ້ມຄອງ ແລະກວດກາການດຳເນີນກິດຈະການຫ້ອງປິ່ນປົວສັດ, ພ້ອມທັງມີສິດສະເໜີໂຈະ ຫຼືຍົກເລີກການດຳເນີນກິດຈະການດັ່ງກ່າວ ຖ້າເຫັນວ່າມີການລະເມີດລະບຽບກົດໝາຍ ແລະຂໍ້ຫ້າມທີ່ໄດ້

ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້ ໂດຍສົມທົບກັບຂະແໜງອຸດສາຫະກໍາ ແລະ ການຄ້າ ຕາມກໍລະນີ ດັ່ງນີ້:

1. **ການໂຈະ:** ຜູ້ດໍາເນີນການບໍ່ປະຕິບັດຕາມການຕັກເຕືອນຂອງເຈົ້າໜ້າທີ່ສັດຕະວະແພດ; ບໍ່ຕໍ່ ໃບອະນຸຍາດດໍາເນີນກິດຈະການຫ້ອງປິ່ນປົວສັດ ຕາມກໍານົດເວລາ;
2. **ການຍົກເລີກ:** ຜູ້ປະກອບການຫ້ອງປິ່ນປົວສັດ ເສຍຊີວິດ ໂດຍບໍ່ໄດ້ໂອນກໍາມະສິດ ໃຫ້ຄົນອື່ນສືບທອດແທນ; ບໍ່ໄດ້ຮັບໃບອະນຸຍາດໃຫ້ຕໍ່ໃບອະນຸຍາດດໍາເນີນ ກິດຈະການຫ້ອງປິ່ນປົວສັດ; ຖືກກ່າວເຕືອນ ແລະປັບໃໝມາແລ້ວ 3 ຄັ້ງ; ບໍ່ປະຕິບັດຕາມມາດຕະຖານເຕັກນິກ ທີ່ວາງອອກ.

## ໝວດທີ 3
## ຮ້ານຂາຍຢາ ແລະເຄື່ອງມືສັດຕະວະແພດ

### ມາດຕາ 11. ເງື່ອນໄຂຂອງຜູ້ຂໍອະນຸຍາດດໍາເນີນກິດຈະການຂາຍຢາ ແລະເຄື່ອງມືສັດຕະວະແພດ

ຜູ້ຂໍອະນຸຍາດດໍາເນີນກິດຈະການຂາຍຢາ ແລະເຄື່ອງມືສັດຕະວະແພດ ຕ້ອງມີເງື່ອນໄຂ ຄົບຖ້ວນ ດັ່ງນີ້:

1. ມີສຸຂະພາບແຂງແຮງ ແລະອາຍຸບໍ່ຕໍ່າກວ່າ 20 ປີ;
2. ມີພູມລໍາເນົາຢູ່ ສປປ ລາວ ຖາວອນ ບໍ່ຕໍ່າກວ່າ 5 ປີ;
3. ບໍ່ຢູ່ໃນໄລຍະດໍາເນີນຄະດີ ຫຼືຖືກປະຕິບັດວິໄນ;
4. ບໍ່ມີປະຫວັດລົ້ມລະລາຍທາງດ້ານທຸລະກິດມາກ່ອນ;
5. ມີສະຖານທີ່ຕັ້ງຮ້ານຂາຍຢາ ແລະເຄື່ອງມືສັດຕະວະແພດ ທີ່ເໝາະສົມ ຕາມລະບຽບການທີ່ ກໍານົດໄວ້;
6. ມີອຸປະກອນ, ເຄື່ອງມືສັດຕະວະແພດ ແລະຢາປິ່ນປົວພະຍາດສັດພຽງພໍ;

7. ເປັນຜູ້ທີ່ໄດ້ຮັບການສຶກສາດ້ານສັດຕະວະແພດຊັ້ນປະລິນຍາຕີ ຫຼື ທຽບເທົ່າ ຂຶ້ນໄປ;
8. ມີຜູ້ຊ່ວຍທີ່ມີວິຊາສະເພາະດ້ານສັດຕະວະແພດ ປະຈໍາຢູ່ຮ້ານ ໃນເວລາທີ່ຕົນເອງບໍ່ຢູ່.

**ມາດຕາ 12. ສະຖານທີ່ຕັ້ງ ແລະອຸປະກອນຮັບໃຊ້ໃນຮ້ານຂາຍຢາ ແລະເຄື່ອງມືສັດຕະວະແພດ**

ສະຖານທີ່ຕັ້ງ ແລະອຸປະກອນຮັບໃຊ້ໃນຮ້ານຂາຍຢາ ແລະເຄື່ອງມືສັດຕະວະແພດ ຕ້ອງໄດ້ຕາມ ມາດຕະຖານທາງດ້ານເຕັກນິກວິຊາການ ດັ່ງນີ້:

1. **ສະຖານທີ່ຕັ້ງ:** ຕ້ອງຕັ້ງຢູ່ບ່ອນສະອາດ, ມີເນື້ອທີ່ບໍ່ຕໍ່າກວ່າ 12 ຕາແມັດ, ເປັນຫ້ອງ ຫຼືເຮືອນ ສະເພາະ, ບໍ່ປົນເປກັບສະຖານທີ່ພັກເຊົາ ຫຼືບ່ອນຂາຍເຄື່ອງອື່ນໆ ທີ່ບໍ່ແມ່ນຢາ ແລະມີຫ້ອງ ສາງຕ່າງຫາກ ຊຶ່ງມີເນື້ອທີ່ບໍ່ຕໍ່າກວ່າ 9 ຕາແມັດ; ຕັ້ງຢູ່ບ່ອນທີ່ໄດ້ອະນຸຍາດ ຖ້າຍ້າຍສະ ຖານທີ່ ໃຫ້ປະກອບເອກະສານ ແລະຂໍອະນຸມັດຄືນໃໝ່;
2. **ອຸປະກອນຮັບໃຊ້:** ມີອຸປະກອນຮັບໃຊ້ໃນການເກັບຮັກສາ ແລະວາງຈໍາໜ່າຍຢ່າງຄົບຖ້ວນ ເຊັ່ນ: ຕູ້ແກ້ວເກັບຮັກສາຢາ ແລະເຄື່ອງມືສັດຕະວະແພດ ສໍາລັບວາງຂາຍ, ຕູ້ເຢັນສໍາລັບເກັບຮັກສາຢາກັນພະຍາດສັດ; ມີກັບ ແລະຖົງຢາງທີ່ສະອາດ ທີ່ຈໍ້າກາຮ້ານ ເພື່ອໃສ່ຢາ;
3. **ປ້າຍຮ້ານ:** ພື້ນສີຂຽວ ຫຼືສີຟ້າ, ອັກສອນສີຂາວ ຊຶ່ງຂຽນເປັນພາສາລາວ ແລະພາສາຕ່າງປະເທດ ໂດຍລະບຸຊື່ເຈົ້າຂອງຮ້ານ, ທີ່ຢູ່, ໂທລະສັບ, ເລກທະບຽນທຸລະກິດ ແລະເລກທີອະນຸ ຍາດດໍາເນີນກິດຈະການ;
4. **ເອກະສານປະຈໍາຮ້ານ:** ໃບອະນຸຍາດດໍາເນີນກິດຈະການ ຈາກກົມລ້ຽງສັດ ແລະການປະມົງ ຫຼືພະແນກກະສິກໍາ ແລະປ່າໄມ້ປະຈໍາ

ແຂວງ, ນະຄອນ; ໃບອະນຸຍາດດຳເນີນທຸລະກິດ ຈາກຂະແໜງອຸດສາຫະກຳ ແລະການຄ້າ ແລະໃບປະຕັງ ຈາກຂະແໜງສ່ວຍອາສາກອນ ແລະປຶ້ມຕິດຕາມການກວດກາຂອງພະນັກງານກວດກາ.

**ມາດຕາ 13. ການຂໍອະນຸຍາດດຳເນີນກິດຈະການຂາຍຢາ ແລະເຄື່ອງມືສັດຕະວະແພດ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ມີຈຸດປະສົງດຳເນີນກິດຈະການຂາຍຢາ ແລະເຄື່ອງມືສັດຕະວະແພດ ຕ້ອງປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ ແລະປະກອບເອກະສານເພື່ອຂໍອະນຸຍາດຈາກກົມລ້ຽງສັດ ແລະການປະມົງ ຫຼືພະແນກກະສິກຳ ແລະປ່າໄມ້ປະ ຈຳແຂວງ, ນະຄອນ ດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດດຳເນີນກິດຈະການຂາຍຢາ ແລະເຄື່ອງມືສັດຕະວະແພດ;
2. ໃບຊີວະປະຫວັດຫຍໍ້ ທີ່ມີຮູບຕິດ ບໍ່ກາຍ 1 ປີ;
3. ໃບຢັ້ງຢືນສຸຂະພາບ ທີ່ອອກໃຫ້ບໍ່ກາຍ 3 ເດືອນ;
4. ໃບຢັ້ງຢືນທີ່ຢູ່ປັດຈຸບັນທີ່ມີຮູບຕິດ;
5. ຮູບຖ່າຍບໍ່ເກີນ 1 ປີ, ຂະໜາດ 3 x 4 ຈຳນວນ 3 ໃບ;
6. ໃບແຈ້ງໂທດ;
7. ຖ້າແມ່ນພະນັກງານສັງກັດລັດ ຕ້ອງມີໃບຢັ້ງຢືນຈາກກົມກອງທີ່ສັງກັດ;
8. ແຜນວາດທີ່ຈະຕັ້ງຮ້ານຂາຍຢາ ແລະເຄື່ອງມືສັດຕະວະແພດ;
9. ໃບປະກາດສະນີຍະບັດດ້ານສັດຕະວະແພດຊັ້ນປຣິນຍາຕີ ຫຼືທຽບເທົ່າ ຂຶ້ນໄປ;
10. ໃບຢັ້ງຢືນການລົງກວດກາສະຖານທີ່ຂອງເຈົ້າໜ້າທີ່ກ່ອນອະນຸຍາດ;
11. ບັນຊີຢາ ແລະເຄື່ອງມືສັດຕະວະແພດ ທີ່ຈະຂາຍ.

**ມາດຕາ 14. ການຕໍ່ໃບອະນຸຍາດດຳເນີນກິດຈະການຂາຍຢາ ແລະເຄື່ອງມືສັດຕະອະແພດ**

ໃບອະນຸຍາດດຳເນີນກິດຈະການຂາຍຢາ ແລະເຄື່ອງມືສັດຕະອະແພດ ມີອາຍຸການນຳໃຊ້ 1 ປີ. ກ່ອນຈະໝົດອາຍຸການນຳໃຊ້ 1 ເດືອນ ຖ້າຜູ້ປະກອບການ ມີຈຸດປະສົງດຳເນີນກິດຈະການຕໍ່ ຕ້ອງປະກອບເອກະສານ ເພື່ອຂໍຕໍ່ ດັ່ງນີ້:

1. ໃບຄຳຮ້ອງຂໍສືບຕໍ່ດຳເນີນກິດຈະການຂາຍຢາແລະເຄື່ອງມືສັດຕະອະແພດ;
2. ໃບຢັ້ງຢືນສຸຂະພາບ ທີ່ອອກໃຫ້ບໍ່ກາຍ 3 ເດືອນ;
3. ໃບຢັ້ງຢືນທີ່ຢູ່ປັດຈຸບັນ ທີ່ມີຮູບຕິດ;
4. ຮູບຖ່າຍບໍ່ເກີນ 1 ປີ, ຂະໜາດ 3 x 4 ຈຳນວນ 3 ໃບ;
5. ບົດບັນທຶກການກວດກາຮ້ານຂາຍຢາແລະເຄື່ອງມືສັດຕະອະແພດ ຈາກເຈົ້າໜ້າທີ່ສັດຕະ ອະແພດ.

**ມາດຕາ 15. ພັນທະຂອງຜູ້ປະກອບການຂາຍຢາ ແລະ ເຄື່ອງມືສັດຕະອະແພດ ໃນການດຳເນີນກິດຈະການຂາຍຢາແລະເຄື່ອງມືສັດຕະອະແພດຜູ້ປະກອບການມີພັນທະ ດັ່ງນີ້:**

1. ໃຫ້ຄຳແນະນຳແກ່ລູກຄ້າ ທີ່ມາຊື້ຢາ ແລະຜະລິດຕະພັນການແພດ ຈາກຮ້ານຂອງຕົນ ກ່ຽວກັບວິທີການນຳໃຊ້, ການເກັບຮັກສາ ແລະຂໍ້ຄວນລະວັງໃນການນຳໃຊ້ຢາຢ່າງຈະແຈ້ງ ເພື່ອຮັບປະກັນການນຳໃຊ້ຢາຢ່າງຖືກຕ້ອງ ແລະປອດໄພ;
2. ອຳນວຍຄວາມສະດວກ ໃຫ້ແກ່ເຈົ້າໜ້າທີ່ສັດຕະອະແພດ ໃນເວລາລົງມາກວດກາ;
3. ເສຍຄ່າທຳນຽມ ແລະຄ່າບໍລິການ ຕາມທີ່ໄດ້ກຳນົດໄວ້ໃນລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍຄ່າທຳນຽມແຕ່ຄ່າບໍລິການທີ່ປະກາດໃຊ້ໃນແຕ່ລະໄລຍະ;
4. ປະຕິບັດພັນທະອື່ນ ຕາມຫຼັກວິຊາການສັດຕະອະແພດ.

**ມາດຕາ 16. ການໂຈະ ແລະຍົກເລີກກິດຈະການຂາຍຢາ ແລະເຄື່ອງມືສັດຕະອະແພດ**

ກົມລ້ຽງສັດ ແລະການປະມົງ ແລະພະແນກກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນ ມີໜ້າທີ່ຄຸ້ມຄອງ ແລະກວດກາຮ້ານຂາຍຢາ ແລະເຄື່ອງມືສັດຕະອະແພດ, ພ້ອມທັງມີສິດສະເໜີໂຈະ ຫຼືຍົກເລີກການດຳເນີນກິດຈະການດັ່ງກ່າວ ຖ້າເຫັນວ່າມີການລະເມີດລະບຽບກົດໝາຍ ແລະຂໍ້ຫ້າມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ໂດຍສົມທົບກັບຂະແໜງອຸດສາຫະກຳ ແລະການຄ້າ ຕາມກໍລະນີ ດັ່ງນີ້:

1. **ການໂຈະ:** ຜູ້ດຳເນີນກິດຈະການບໍ່ປະຕິບັດຕາມການຕັກເຕືອນຂອງເຈົ້າໜ້າທີ່ສັດຕະອະ ແພດ ຫຼືບໍ່ຕໍ່ໃບອະນຸຍາດດຳເນີນກິດຈະການຮ້ານຂາຍຢາ ແລະເຄື່ອງມືສັດຕະອະແພດ ຕາມກຳນົດເວລາ;
2. **ການຍົກເລີກ:** ເຈົ້າຂອງຮ້ານຂາຍຢາ ແລະເຄື່ອງມືສັດຕະອະແພດເສຍຊີວິດ ໂດຍບໍ່ໄດ້ ໂອນກຳມະສິດໃຫ້ຄົນອື່ນສືບທອດ; ກວດພົບເຫັນຢາ ຫຼືເຄື່ອງມືສັດຕະອະແພດທີ່ຜິດກົດໝາຍ; ບໍ່ໄດ້ຮັບໃບອະນຸຍາດໃຫ້ດຳເນີນກິດຈະການຢາ ແລະເຄື່ອງມືສັດຕະອະແພດຕໍ່; ຖືກກ່າວເຕືອນ ແລະປັບໃໝມາແລ້ວ 3 ຄັ້ງ; ບໍ່ປະຕິບັດຕາມມາດຕະຖານເຕັກນິກທີ່ວາງອອກ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 17. ຂໍ້ຫ້າມສຳລັບຜູ້ປະກອບການ**

**ຫ້າມຜູ້ປະກອບການ ບໍລິການປິ່ນປົວສັດ ມີພຶດຕິກຳ ດັ່ງນີ້:**

1. ຍົກຍ້າຍຫຼືປ່ຽນແປງຕໍ່ເຕີມສະຖານທີ່ບໍລິການປິ່ນປົວສັດໂດຍບໍ່ໄດ້ຮັບອະນຸຍາດ;
2. ປ່ຽນຜູ້ດຳເນີນການ ຫຼືຜູ້ປິ່ນປົວສັດ ໂດຍບໍ່ໄດ້ແຈ້ງໃຫ້ເຈົ້າໜ້າທີ່ສັດຕະອະແພດ ຮັບຮູ້;

3. ຮັບສັດມາປິ່ນປົວເກີນຄວາມສາມາດຂອງການບໍລິການຂອງຕົນ;
4. ມີສຽງລົບກວນຜູ້ອາໄສອ້ອມຂ້າງ ຫຼືການກະທຳອື່ນທີ່ສົ່ງຜົນກະທົບອັນບໍ່ດີຕໍ່ສິ່ງແວດລ້ອມ;
5. ຖິ້ມຊາກ ແລະສິ້ນສ່ວນສັດຕາຍ ຕາມສະຖານທີ່ສາທາລະນະ ແລະສະຖານທີ່ອື່ນ;
6. ນາບຂູ່, ກົດໜ່ວງຖ່ວງດຶງ ແລະຂັດຂວາງການປະຕິບັດວຽກງານຂອງເຈົ້າໜ້າທີ່ສັດຕະວະ ແພດ.

**ຫ້າມຜູ້ປະກອບການຂາຍຢາ ແລະເຄື່ອງມືສັດຕະວະແພດ ມີພຶດຕິກຳ ດັ່ງນີ້:**

1. ຕັ້ງຮ້ານຂາຍຢາກັນ, ຢາປິ່ນປົວພະຍາດສັດ ແລະເຄື່ອງມືສັດຕະວະແພດ ຢູ່ໃນການຄຸ້ມ ຄອງຂອງເຂດຈັດສັນຕະຫຼາດສົດ;
2. ຍົກຍ້າຍຮ້ານຂາຍຢາ ແລະເຄື່ອງມືສັດຕະວະແພດ ໂດຍບໍ່ໄດ້ຮັບອະນຸຍາດຕາມຫຼັກວິຊາການ;
3. ປ່ຽນຜູ້ດຳເນີນການຂາຍຢາ ແລະເຄື່ອງມືສັດຕະວະແພດ ໂດຍບໍ່ໄດ້ແຈ້ງໃຫ້ເຈົ້າໜ້າທີ່ ສັດ ຕະວະແພດ ຮັບຮູ້;
4. ຂາຍຢາກັນ, ຢາປົວພະຍາດສັດ ແລະເຄື່ອງມືສັດຕະວະແພດ ປົນກັບຢາປິ່ນປົວສຳລັບຄົນ ແລະເກີນບັນຊີທີ່ຕົນໄດ້ຮັບອະນຸຍາດໃຫ້ຂາຍ;
5. ຂາຍຢາກັນ, ຢາປົວພະຍາດສັດ ແລະເຄື່ອງມືສັດຕະວະແພດ ຕາມສະຖານທີ່ທີ່ບໍ່ໄດ້ອະນຸ ມັດໃຫ້ຂາຍ;
6. ຂາຍຢາກັນ ແລະຢາປົວພະຍາດສັດ ທີ່ບໍ່ມີສະຫຼາກຕິດ, ຢາປອມ, ຢາໝົດອາຍຸການນຳໃຊ້, ຢາເຊື່ອມຄຸນນະພາບ ແລະຢາທີ່ບໍ່ຢູ່ໃນບັນຊີ;
7. ເອົາຮ້ານຂາຍຢາ ແລະເຄື່ອງມືສັດຕະວະແພດ ເປັນບ່ອນກວດ ແລະບໍລິການປິ່ນປົວສັດ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

### ມາດຕາ 18. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ຄອບຄົວ ແລະການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນການປະຕິບັດການບໍລິການປິ່ນປົວສັດ, ການຂາຍຢາ ແລະເຄື່ອງມືສັດຕະວະແພດ ຈະໄດ້ຮັບການຍ້ອງຍໍ ແລະປະຕິບັດນະໂຍບາຍອື່ນ ຕາມຄວາມເໝາະສົມ.

ພະນັກງານ ແລະເຈົ້າໜ້າທີ່ສັດຕະວະແພດ ຜູ້ທີ່ມີຜົນງານດີເດັ່ນໃນການຕິດຕາມກວດກາການບໍລິການປິ່ນປົວສັດ, ການຂາຍຢາ ແລະຜະລິດຕະພັນການແພດ, ເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການລ້ຽງສັດ ແລະການສັດຕະວະແພດ ແລະຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ຈະໄດ້ຮັບການຍ້ອງ ຍໍ ແລະປະຕິບັດນະໂຍບາຍ ຕາມລະບຽບກົດໝາຍ.

### ມາດຕາ 19. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ຄອບຄົວ ແລະການຈັດຕັ້ງ ທີ່ລະເມີດຂໍ້ຫ້າມ ແລະຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ດຳເນີນທາງແພ່ງ ຫຼືທາງອາຍາ ຕາມກໍລະນີ ເບົາ ຫຼືໜັກ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການລ້ຽງສັດ ແລະການສັດຕະວະແພດ ແລະນິຕິກຳອື່ນທີ່ກ່ຽວຂ້ອງ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

### ມາດຕາ 20. ການຈັດຕັ້ງປະຕິບັດ

ມອບໃຫ້ກົມລ້ຽງສັດ ແລະການປະມົງ ເປັນເຈົ້າການປະສານສົມທົບກັບພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ, ນະຄອນ, ອົງການປົກຄອງ

ທ້ອງຖິ່ນ ແລະບັນດາຂະແໜງການທີ່ກ່ຽວຂ້ອງ ເພື່ອໂຄ ສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ

**ມາດຕາ 21. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ທຸກຂໍ້ກຳນົດ ແລະກົດລະບຽບທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້

ວິໄລວັນ ພົມເຂ